**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ເລກທີ 3708 /ສທ

ນະຄອນຫຼວງວຽງຈັນ, ວັນທີ 21 DEC 2022

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສາທາລະນະສຸກ ສະບັບເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010;
- ອີງຕາມ ໜັງສືສະເໜີ ຂອງກົມອາຫານ ແລະ ຢາ ສະບັບເລກທີ 6126/ກອຢ, ລົງວັນທີ 22 ພຶດສະພາ 2022.

**ລັດຖະມົນຕີກະຊວງສາທາລະນະສຸກ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ວິທີການ ກ່ຽວກັບການຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ ທີ່ຈໍລະຈອນແຈກຢາຍໃນ ສປປ ລາວ ໃຫ້ມີຄວາມສົມເຫດສົມຜົນຕາມສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມແຕ່ລະໄລຍະແນ່ໃສ່ຮັກສາຄວາມສະຖຽນລະພາບ ດ້ານລາຄາ ທັງເປັນການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ຂອງ ຜູ້ດຳເນີນທຸລະກິດ, ຜູ້ຊົມໃຊ້ ແລະ ຂອງລັດ.

### ມາດຕາ 2 ການຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ

ການຄຸ້ມຄອງລາຄາ ແມ່ນ ການກວດກາ ແລະ ຕິດຕາມ ການກຳນົດລາຄາ ຢາ ແລະ ຜະລິດຕະພັນການແພດຂອງຜູ້ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ຢູ່ສະຖານທີ່ບໍລິການສາທາລະນະສຸກ ທັງພາກລັດ ແລະ ພາກ

ເອກະຊົນໂດຍຂະແໜງສາທາລະນະສຸກ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານບັນດາຫຼັກການ ແລະ ຂໍ້ບັງຄັບທີ່ກຳນົດພາຍໃຕ້ຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຢາ** ໝາຍເຖິງ ຜະລິດຕະພັນຢາ ທີ່ໄດ້ຜະລິດ, ປຸງແຕ່ງສຳເລັດຮູບຕາມສູດຕຳລາ ແລະ ກຳມະວິທີ ວິທະຍາສາດ ທີ່ແນ່ນອນ ຊຶ່ງມີການຫຸ້ມຫໍ່ ແລະ ຕິດສະຫຼາກ ໃນນັ້ນສ່ວນປະກອບທີ່ອອກລິດໄດ້ຖືກດັດແປງໃຫ້ເໝາະສົມກັບການນຳໃຊ້ສຳລັບຄົນ;

2. **ຜະລິດຕະພັນການແພດ** ໝາຍເຖິງ ອຸປະກອນການແພດໃຊ້ສິ້ນເປືອງໃຊ້ຄັ້ງດຽວເຊັ່ນ: ຜ້າອັດປາກ ການແພດ, ຖົງມື ແລະ ອື່ນໆ ທີ່ກະຊວງສາທາລະນະສຸກ ກຳນົດໃນແຕ່ລະໄລຍະ;

3. **ລາຄາ** ໝາຍເຖິງ ຄ່າຕອບແທນ ທີ່ເປັນເງິນ, ວັດຖຸ ສິ່ງຂອງ ຫຼື ຜົນປະໂຫຍດ ອື່ນໆ ສຳລັບການຈຳໜ່າຍສິນຄ້າ ຫຼື ການບໍລິການ. ລາຄາປະກອບດ້ວຍ: ລາຄາທີ່ລັດຄຸ້ມຄອງ ແລະ ລາຄາທີ່ກຳນົດໂດຍຜູ້ດຳເນີນທຸລະກິດດ້ານຢາ;

4. **ລາຄາຈາກໂຮງງານ** ໝາຍເຖິງ ລາຄາຈາກໂຮງງານຜູ້ຜະລິດ ທີ່ບໍລິສັດນຳເຂົ້າຕ້ອງແຈ້ງໃນເວລາທີ່ມາຂໍຂຶ້ນ ຫຼື ຕໍ່ ທະບຽນຜະລິດຕະພັນຢາ;

5. **ລາຄາຂາຍຍົກຄາດຄະເນ** ໝາຍເຖິງ ລາຄາຂາຍຍົກທີ່ ໂຮງງານຜະລິດຢາ, ບໍລິສັດນຳເຂົ້າ ມາຈົດແຈ້ງໃນຕອນຂຶ້ນທະບຽນຜະລິດຕະພັນຢາ;

6. **ລາຄາຂາຍຍ່ອຍຄາດຄະເນ** ໝາຍເຖິງ ລາຄາຂາຍໃຫ້ກັບຜູ້ບໍລິໂພກ ທີ່ໂຮງງານຜະລິດຢາ, ບໍລິສັດນຳເຂົ້າຕ້ອງມາຈົດແຈ້ງໃນຕອນຂຶ້ນທະບຽນຜະລິດຕະພັນຢາ;

7. **ລາຄານຳເຂົ້າ (CIF: Cost Insurance Freight)** ໝາຍເຖິງ ລາຄາທີ່ລວມ ລາຄາຂາຍຂອງໂຮງງານຜູ້ຜະລິດ, ປະກັນໄພ, ຄ່າຂົນສົ່ງຮອດດ່ານນຳເຂົ້າ ສປປ ລາວ ແຕ່ບໍ່ລວມພາສີນຳເຂົ້າ;

8. **ລາຄາຢາຜະລິດພາຍໃນ** ໝາຍເຖິງ ມູນຄ່າວັດຖຸດິບ, ຄ່າແຮງງານ, ຄ່າໃຊ້ຈ່າຍເຂົ້າໃນການຜະລິດ ມູນຄ່າ ທາງເສດຖະກິດ (ດອກເບ້ຍກູ້ຢືມຖ້າມີການກູ້ຢືມ) + ຄ່າໃຊ້ຈ່າຍໃນການບໍລິຫານ;

9. **ລາຄາຂາຍຍົກ**: ໝາຍເຖິງ ລາຄາຂາຍລະຫວ່າງຫົວໜ່ວຍທຸລະກິດນຳກັນ ຫຼື ລາຄາທີ່ຫົວໜ່ວຍທຸລະກິດຂາຍໃຫ້ສະຖານທີ່ບໍລິການສາທາລະນະສຸກ;

10. **ລາຄາຂາຍຍ່ອຍ** ໝາຍເຖິງ ລາຄາທີ່ຂາຍໃຫ້ຜູ້ບໍລິໂພກ;

11. **ການແຈ້ງຄືນລາຄາ** ໝາຍເຖິງ ລາຄາຂາຍຍົກຄາດຄະເນ, ລາຄາຂາຍຍ່ອຍຄາດຄະເນ ທີ່ມີການປ່ຽນແປງ ຈາກເດີມ;

12. **ຜູ້ດຳເນີນທຸລະກິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຜະລິດ, ຈຳໜ່າຍ, ຊື້ ຫຼື ນຳເຂົ້າ ເພື່ອການຈຳໜ່າຍ ຢາ ແລະ ຜະລິດຕະພັນການແພດ ຫຼື ການບໍລິການ ຢູ່ໃນ ຂອບເຂດດິນແດນ ຂອງ ສປປ ລາວ;

13. **ຜູ້ຊົມໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້, ນຳໃຊ້ຜະລິດຕະພັນຢາ, ຜະລິດຕະພັນການແພດ ແລະ ການບໍລິການ ຢ່າງຖືກຕ້ອງຕາມກົດໝາຍ ໂດຍບໍ່ມີຈຸດປະສົງທາງການຄ້າຢູ່ໃນ ຂອບເຂດດິນແດນຂອງ ສປປ ລາວ;

14. **ຄວາມໂປ່ງໃສ** ໝາຍເຖິງ ການເຮັດໃຫ້ມາດຕະການຄຸ້ມຄອງລາຄາ ມີຄວາມຊັດເຈນ ແລະ ຖືກເຜີຍແຜ່ຕໍ່ສາທາລະນະຊົນ;

15. **ຢາຊື່ເອກະພາບສາກົນ** ໝາຍເຖິງ ຊື່ຜະລິດຕະພັນຢາ ຫຼື ຊື່ ຂອງຕົວຢາຕົ້ນຕໍທີ່ຮັບຮູ້ຢ່າງເປັນທາງການຈາກອົງການອະນາໄມໂລກ ຊຶ່ງນໍາໃຊ້ຢ່າງກວ້າງຂວາງໃນທົ່ວໂລກ ແລະ ບໍ່ມີໃຜເປັນເຈົ້າຂອງລິຂະສິດ;

16. **ອັດຕາເພີ່ມລາຄາຂາຍຍ່ອຍ** ໝາຍເຖິງ ເປີເຊັນເພີ່ມຂອງລາຄາເພື່ອຂາຍຍ່ອຍ;

17. **ບັນຊີຢາຈໍາເປັນພື້ນຖານແຫ່ງຊາດ** ໝາຍເຖິງ ບັນຊີຢາຈໍາເປັນຕົ້ນຕໍ ເພື່ອໃຊ້ໃນການກັນພະຍາດ, ປິ່ນປົວ ແລະ ຮັກສາສຸຂະພາບ ຂອງທຸກຄົນ ມີໄວ້ບໍລິການ ທຸກເວລາ ຢູ່ທຸກລະດັບຂອງສະຖານທີ່ບໍລິການສາທາລະນະສຸກ ໂດຍອີງໃສ່ສະພາບການເປັນພະຍາດທີ່ແຜ່ຫຼາຍ ແລະ ສະພາບການດ້ານເສດຖະກິດ ຂອງປະເທດ, ຢາຈໍາເປັນພື້ນຖານສ່ວນຫຼາຍແມ່ນຢາດັ່ງວທີ່ມີຊື່ເອກະພາບສາກົນ;

18. **ຫົວໜ່ວຍທຸລະກິດ** ໝາຍເຖິງ ໂຮງງານຜະລິດ, ບໍລິສັດຂາອອກ-ຂາເຂົ້າ, ສາຂາຈໍາໜ່າຍ, ບໍລິສັດຂາຍຍົກພາຍໃນ, ຮ້ານຂາຍຍ່ອຍ, ໂຮງໝໍ ແລະ ຫ້ອງກວດພະຍາດເອກະຊົນ ກ່ຽວກັບ ຜະລິດຕະພັນຢາ ແລະ ຜະລິດຕະພັນການແພດ;

19. **ລາຄາກາງ** ໝາຍເຖິງດັດສະນີໝາຍລາຄາຢາ ແລະ ຜະລິດຕະພັນການແພດທີ່ກົມອາຫານແລະຢາ ກະຊວງສາທາລະນະສຸກກໍານົດອອກ ເພື່ອໃຊ້ເປັນບ່ອນອີງໃນການປະມູນຈັດຊື້ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນດ້ວຍທຶນຂອງລັດ. ດັດສະນີໝາຍລາຄາຈະຊ່ວຍໃຫ້ການຈັດຊື້ພາກລັດມີປະສິດທິຜົນ ແລະ ໂປ່ງໃສ ຮັບປະກັນການເຂົ້າເຖິງຢາ ແລະ ຜະລິດຕະພັນການແພດຂອງຜູ້ບໍລິໂພກ ແລະ ປ້ອງກັນບໍ່ໃຫ້ລາຄາຜະລິດຕະພັນດັ່ງກ່າວແພງເກີນໄປ.

**ມາດຕາ 4 ຫຼັກການການຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ**

ການຄຸ້ມຄອງລາຄາ ຕ້ອງປະຕິບັດຕາມຫຼັກການ ດັ່ງລຸ່ມນີ້:

1. ການຄຸ້ມຄອງລາຄາ ແມ່ນ ປະຕິບັດຕາມກົນໄກການຕະຫຼາດ ໂດຍໃຫ້ ຫົວໜ່ວຍທຸລະກິດກໍານົດລາຄາ ຢາ ແລະ ຜະລິດຕະພັນການແພດ ດ້ວຍຕົນເອງ ພາຍໃຕ້ ການຕິດຕາມ ກວດກາ ຂອງລັດເພື່ອໃຫ້ເປັນໄປຕາມ ກົດໝາຍ ແລະ ລະບຽບການ ທາງດ້ານຢາ ແລະ ຜະລິດຕະພັນການແພດ ແລະ ບັນດານິຕິກໍາອື່ນທີ່ກ່ຽວຂ້ອງ;

2. ລັດ ເຄົາລົບສິດໃນການກໍານົດລາຄາ ແລະ ການແຂ່ງຂັນດ້ານລາຄາ ຂອງຜູ້ດໍາເນີນທຸລະກິດ ຕາມກົດໝາຍ ແລະ ລະບຽບການ;

3. ລັດ ນໍາໃຊ້ມາດຕະການໃນການຄຸ້ມຄອງ ລາຄາຕາມຄວາມຈໍາເປັນບົນພື້ນຖານຫຼັກການບໍ່ຈໍາແນກປະຕິບັດ, ມີຄວາມໂປ່ງໄສ ແລະ ສາມາດກວດສອບໄດ້;

4. ການຄຸ້ມຄອງລາຄາ ແມ່ນ ໃຫ້ກະຈາຍຄວາມຮັບຜິດຊອບໃຫ້ກັບບັນດາການຈັດຕັ້ງສູນກາງ ແລະ ທ້ອງຖິ່ນ.

**ມາດຕາ 5 ຂອບເຂດການນໍາໃຊ້**

ຂໍ້ຕົກລົງ ສະບັບນີ້ ມີຂອບເຂດນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດທີ່ດໍາເນີນທຸລະກິດດ້ານ ຢາ ແລະ ຜະລິດຕະພັນການແພດ ໃນສະຖານທີ່ບໍລິການສາທາລະນາສຸກ ທັງພາກລັດ ແລະ ພາກເອກະຊົນ.

**ມາດຕາ 6 ການຈົດແຈ້ງ ແລະ ການແຈ້ງຄືນລາຄາ**

1. ການຈົດແຈ້ງລາຄາ ແມ່ນ ການແຈ້ງລາຄາເປັນລາຍລັກອັກສອນ ຂອງໂຮງງານຜະລິດຢາ ແລະ ບໍລິສັດ ນໍາເຂົ້າ ຢາປົວພະຍາດ ແລະ ອຸປະກອນການແພດກ່ຽວກັບລາຄາຢາ ຄາດຄະເນ ຂາຍຍົກ ແລະ ຂາຍຍ່ອຍ ໂດຍໃຫ້ມີແຜນການການຄິດໄລ່ ຄາດຄະເນການກໍານົດລາຄາ ຂາຍຍົກ ແລະ ຂາຍຍ່ອຍ, ຕາມໂຄງປະກອບລາຄາ;

2. ການແຈ້ງຄືນລາຄາ ແມ່ນໂຮງງານຜູ້ຜະລິດ, ບໍລິສັດນໍາເຂົ້າ ຂໍແຈ້ງຄືນລາຄາຢາ ແລະ ຜະລິດຕະພັນການແພດ ທີ່ຜະລິດພາຍໃນ ແລະ ຜະລິດຕະພັນການແພດນໍາເຂົ້າ, ລາຄາຂາຍຍົກຄາດຄະເນ, ລາຄາຂາຍຍ່ອຍຄາດຄະເນ ທີ່ມີການປ່ຽນແປງຈາກເດີມ ໂດຍປະຕິບັດຕາມຫຼັກການໃນຂໍ້ຕົກລົງສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 7 ສະກຸນເງິນທີ່ໃຊ້ໃນການຈົດແຈ້ງລາຄາ ແລະ ການແຈ້ງຄືນ**

1. ສະກຸນເງິນທີ່ໃຊ້ໃນການຈົດແຈ້ງລາຄາ CIF ແມ່ນ ເງິນກີບ, ໃນເວລາທີ່ແຈ້ງລາຄາຕ້ອງຄັດຕິດເອກະສານແລກປ່ຽນເງິນຕາໃນຊ່ວງເວລາທີ່ໄດ້ໄປຈົດແຈ້ງສິນຄ້າກັບພາສີ;

2. ອັດຕາແລກປ່ຽນເງິນຕາຕ່າງປະເທດ ແມ່ນ ຄິດໄລ່ຕາມຕົວຈິງທີ່ຫົວໜ່ວຍທຸລະກິດໄດ້ເຮັດທຸລະກໍາການເງິນໄປຊໍາລະຄ່າສິນຄ້າ ໂດຍຜ່ານບໍລິການທະນາຄານ ເຊິ່ງລວມທັງຮູບແບບການແລກປ່ຽນຜ່ານທະນາຄານເພື່ອໂອນຊໍາລະສິນຄ້າ ແລະ ການກູ້ຢືມເພື່ອຊໍາລະຄ່າສິນຄ້າ, ກໍລະນີກູ້ຢືມ ແມ່ນໄລ່ອັດຕາແລກປ່ຽນຕາມມື້ທີ່ໄດ້ໂອນເງິນໄປຊໍາລະຄ່າສິນຄ້າ;

3. ການແຈ້ງ, ຈົດແຈ້ງຄືນ ແລະ ກໍານົດລາຄາຂາຍຍົກ, ລາຄາຂາຍຍ່ອຍ ແມ່ນ ເປັນສະກຸນເງິນກີບ,ລາຄາຂາຍຍົກ ແລະ ລາຄາຂາຍຍ່ອຍ ແມ່ນໄດ້ລວມພາສີ, ອາກອນແລ້ວ.

## ໝວດທີ 2
## ການກໍານົດລາຄາ ຢາ ແລະ ຜະລິດຕະພັນການແພດ

**ມາດຕາ 8 ການກໍານົດລາຄາ ຢາ ແລະ ຜະລິດຕະພັນການແພດ ຢູ່ຫົວໜ່ວຍທຸລະກິດຂາຍຍົກ**

ບັນຫົວໜ່ວຍທຸລະກິດຂາຍຍົກ ຕ້ອງໄດ້ກໍານົດລາຄາຂາຍຍົກ ຂອງແຕ່ລະຜະລິດຕະພັນຢາ ແລະ ຜະລິດຕະພັນການແພດ ຂອງຕົນ ດ້ວຍການແຈ້ງລາຄາຢູ່ກະດານ, ປ້າຍລາຄາ ຫຼື ຮູບການອື່ນໆ ແລ້ວຈັດວາງ, ຫ້ອຍ, ຕິດຢູ່ຕາມບ່ອນດໍາເນີນການຊື້ຂາຍ ທີ່ໃຫ້ລູກຄ້າສາມາດເບິ່ງເຫັນໄດ້ງ່າຍ ແລະ ລາຄາຂາຍຍົກທີ່ກໍານົດແມ່ນບໍ່ໃຫ້ສູງກວ່າ ລາຄາຂາຍຍົກທີ່ ໂຮງງານຜະລິດ ຫຼື ບໍລິສັດຂາອອກ-ຂາເຂົ້າ ໄດ້ຈົດແຈ້ງກັບພາກລັດ.

**ມາດຕາ 9 ການກໍານົດລາຄາ ຢາ ແລະ ຜະລິດຕະພັນການແພດ ຢູ່ຮ້ານຂາຍຍ່ອຍຢາ**

ບັນດາຮ້ານຂາຍຍ່ອຍຢາ ຕ້ອງກໍານົດລາຄາຂາຍຍ່ອຍທຸກ ຜະລິດຕະພັນ ຢາ ແລະ ຜະລິດຕະພັນການແພດຂອງຕົນດ້ວຍການແຈ້ງລາຄາໃສ່ກະດານ ຫຼື ຕິດລາຄາໃສ່ແຜງຢາ ຫຼື ກັບກ່ອງບັນຈຸຢາ ໂດຍຮັບປະກັນການບໍ່ຕິດທັບບັນດາຂໍ້ມູນຈໍາເປັນຂອງຢາ ແລະ ລາຄາຂາຍຍ່ອຍທີ່ກໍານົດໄວ້ແມ່ນບໍ່ໃຫ້ສູງກວ່າລາຄາຂາຍຍ່ອຍທີ່ໂຮງງານຜະລິດ ຫຼື ບໍລິສັດຂາເຂົ້າ ໄດ້ຈົດແຈ້ງກັບພາກລັດ.

**ມາດຕາ 10 ການກຳນົດລາຄາຂາຍຍ່ອຍ ຢາ ແລະ ຜະລິດຕະພັນການແພດ ຢູ່ໂຮງໝໍ, ຫ້ອງກວດພະຍາດຂອງລັດ ແລະ ເອກະຊົນ**

1. ການກຳນົດລາຄາຂາຍຍ່ອຍຢູ່ຫ້ອງຈ່າຍຢາ ຂອງໂຮງໝໍເອກກະຊົນ, ຫ້ອງກວດພະຍາດຂອງເອກະຊົນ ຕ້ອງກຳນົດລາຄາຢາຕາມ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

2. ການກຳນົດລາຄາຂາຍຍ່ອຍ ຂອງບັນດາສະຖານທີ່ບໍລິການສາທາລະນະສຸກຂອງ ລັດ ແລະ ເອກະຊົນ ທີ່ມີການເຊັນສັນຍາໃນການຊຳລະຄ່າ ຢາ ແລະ ຜະລິດຕະພັນການແພດຈາກຫ້ອງການປະກັນສຸຂະພາບແຫ່ງຊາດ ແລະ ອົງການປະກັນສັງຄົມ ຕ້ອງປະຕິບັດຕາມລະບຽບຂອງກະຊວງສາທາລະນະສຸກ;

3. ຜູ້ອຳນວຍການໂຮງໝໍ, ຫ້ອງກວດພະຍາດຂອງລັດ ແລະ ເອກະຊົນ ມີໜ້າທີ່ຮັບຜິດຊອບຕໍ່ການປະຕິບັດຕາມຂໍ້ຕົກລົງທາງດ້ານລາຄາ ຢາ ແລະ ຜະລິດຕະພັນການແພດ ຂອງບັນດາສະຖານທີ່ຂາຍຍ່ອຍຢາ ໃນສະຖານທີ່ຂອງຕົນຄຸ້ມຄອງ.

**ມາດຕາ 11 ການກຳນົດລາຄາກາງ**

ກົມອາຫານ ແລະຢາ ກະຊວງສາທາລະນະສຸກ ເປັນຜູ້ກຳນົດລາຄາກາງຂອງ ຢາ ແລະ ຜະລິດຕະພັນການແພດໂດຍອີງໃສ່ຂໍ້ມູນລາຄາໃນທ້ອງຕະຫຼາດທັງພາຍໃນ ແລະ ສາກົນ.

ລາຄາກາງແມ່ນນຳໃຊ້ເພື່ອເປັນບ່ອນອີງ ໃນການປະມູນຈັດຊື້ຢາ ແລະ ຜະລິດຕະພັນການແພດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ເປັນຂໍ້ມູນໃຫ້ແກ່ການກຳນົດລາຄາ ຫຼື ຄ່າບໍລິການສຸຂະພາບຂອງຄົນເຈັບນອນ ແລະ ຄົນເຈັບກວດເຂດນອກ ໃນສະຖານທີ່ບໍລິການສາທາລະນະສຸກ ພາກລັດ ແລະ ເອກກະຊົນ ທີ່ມີການເຊັນສັນຍາຮັບການຊຳລະຄ່າຢາ ແລະ ຜະລິດຕະພັນການແພດ ຈາກປະກັນສຸຂະພາບ ແລະ ປະກັນສັງຄົມ.

**ມາດຕາ 12 ວິທີກຳນົດລາຄາກາງ**

1. ໃນສະພາບປົກກະຕິການກຳນົດລາຄາກາງ ຈະມີການທົບທວນໃນແຕ່ລະປີສະນັ້ນທຸກໂຮງໝໍ ແລະ ສູນປິ່ນປົວສຸຂະພາບຕ້ອງສົ່ງສຳເນົາໃບນຳສົ່ງຢາໃຫ້ຂະແໜງອາຫານ ແລະ ຢາ ແຂວງ ເພື່ອສັງລວມ ແລະ ສົ່ງໃຫ້ກົມອາຫານ ແລະຢາ ເພື່ອວິເຄາະຂໍ້ມູນລາຄາຢາ ແລະ ຜະລິດຕະພັນການແພດໃນແຕ່ລະປີ. ການປັບປຸງລາຄາກາງແມ່ນອີງໃສ່ຂໍ້ມູນລາຄາຢາ ແລະ ຜະລິດຕະພັນການແພດການທີ່ຈັດຊື້ຕົວຈິ່ງຂອງປີຜ່ານມາ;

2. ໃນສະພາວະສຸກເສີນການກຳນົດລາຄາກາງ ຈະຕ້ອງພິຈາລະນາໃນແຕ່ລະໄລຍະເຊັ່ນ: ມີສະພາບວິກິດທາງດ້ານເສດຖະກິດ-ການເງິນ, ໄພເງິນເຟີ້ ແລະ ສົງຄາມ.

**ມາດຕາ 13 ການຄຸ້ມຄອງລາຄາໃນສະພາວະສຸກເສີນ**

ໃນກໍລະນີມີໄພພິບັດ ແລະ ການລະບາດຂອງພະຍາດ, ກະຊວງສາທາລະນະສຸກ ສາມາດນຳໃຊ້ມາດຕະການຄຸ້ມຄອງດ້ວຍວິທີພິຈາລະນາການຄວບຄຸມລາຄາ ດັ່ງລຸ່ມນີ້:

1. ກຳນົດໂຄງປະກອບລາຄາ;
2. ກຳນົດລາຄາສູງສຸດ, ລາຄາຕໍ່າສຸດ ຫຼື ຂອບເຂດລາຄາ;
3. ຄວບຄຸມສິນຄ້າໃນຄັງແຮສຳຮອງ;
4. ຖົມຊຸມສິນຄ້າ ແລະ ການບໍລິການ;
5. ການດັດສົມການສະໜອງ ແລະ ຄວາມຕ້ອງການ.

ກະຊວງສາທາລະນະສຸກ ຕ້ອງເປັນເຈົ້າການໂດຍມີການປະສານສົມທົບກັບຄະນະຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມຂໍ້ຕົກລົງ 71 /ນຍ, ລົງວັນທີ 6 ຕຸລາ 2017 ແລະ ຂະແໜງການທີ່ກ່ຽວຂ້ອງ ແລະ ບັນດາຫົວໜ່ວຍທຸລະກິດການຢາໃນການກໍານົດລາຍການ ຢາ ແລະ ຜະລິດຕະພັນການແພດ ທີ່ຕ້ອງຄວບຄຸມລາຄາ ຕາມ "ບັນຊີ ກ" ແລະ ລາຍການຕິດຕາມການເໜັງຕີງຂອງລາຄາ ເພື່ອວາງມາດຕະການຄຸ້ມຄອງໃນພາວະສຸກເສີນດັ່ງກ່າວ.

## ໝວດທີ 3
## ຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ ທີ່ໃຊ້ງົບປະມານລັດຖະບານ ແລະ ລາຍຮັບຈາກການໃຫ້ບໍລິການໃນໂຮງໝໍໃນການຈັດຊື້

### ມາດຕາ 14 ການຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ ທີ່ໃຊ້ງົບປະມານລັດ ແລະ ລາຍຮັບຈາກການໃຫ້ບໍລິການຂອງໂຮງໝໍໃນການຈັດຊື້

1. ຢາທີ່ມອນໃນບັນຊີຢາຈໍາເປັນພື້ນຖານ ທີ່ຊົມໃຊ້ໃນບັນດາສະຖານທີ່ບໍລິການສາທາລະນະສຸກຂອງລັດ ແລະ ສະຖານທີ່ບໍລິການທີ່ບໍ່ແມ່ນຂອງລັດແຕ່ມີການເຊັນສັນຍາຮັບການຊໍາລະຄ່າຢາ ແລະ ຜະລິດຕະພັນການແພດ ຈາກປະກັນສຸຂະພາບ ແລະ ປະກັນສັງຄົມ ແມ່ນ ຕ້ອງໄດ້ຈັດຊື້ດ້ວຍຮູບການປະມູນ ໂດຍປະຕິບັດຕາມລະບຽບຂອງກົດໝາຍຈັດຊື້ຈັດຈ້າງ ແລະ ບັນດານິຕິກໍາອື່ນທີ່ກ່ຽວຂ້ອງກັບການຈັດຊື້ປະມູນຢາຂອງກະຊວງສາທາລະນະສຸກ;

2. ລາຄາຢາທີ່ຊະນະປະມູນ ແມ່ນ ບໍ່ໃຫ້ສູງກວ່າລາຄາກາງທີ່ກະຊວງສາທາລະນະສຸກ ໄດ້ກໍານົດໃຫ້ໃນໄລຍະໃກ້ກັບການປະມູນທີ່ສຸດ, ໃນກໍລະນີເປັນຢາທີ່ຍັງບໍ່ທັນກໍານົດລາຄາກາງຈາກກະຊວງສາທາລະນະສຸກ ແມ່ນ ໃຫ້ບໍ່ສູງກວ່າລາຄາຂາຍຍົກທີ່ທາງບໍລິສັດ ຫຼື ໂຮງງານໄດ້ຈົດແຈ້ງນໍາກະຊວງສາທາລະນະສຸກ.

### ມາດຕາ 15 ການແຈ້ງລາຄາ ຢາ ແລະ ຜະລິດຕະພັນການແພດ ທີ່ໄດ້ຈາກການປະມູນຈັດຊື້

ໃຫ້ບັນດາໂຮງໝໍ ແລະ ສະຖານທີ່ບໍລິການສາທາລະນະສຸກ ທີ່ຂຶ້ນກັບກະຊວງສາທາລະນະສຸກ ລວມທັງສະຖານທີ່ບໍລິການທີ່ບໍ່ ແມ່ນ ຂອງລັດ ແຕ່ມີການເຊັນສັນຍາຮັບການຊໍາລະຄ່າ ຢາ ແລະ ຜະລິດຕະພັນການແພດ ຈາກປະກັນສຸຂະພາບ ແລະ ປະກັນສັງຄົມ ສົ່ງລາຍງານຜົນການປະມູນມາຍັງ ກະຊວງສາທາລະນະສຸກ ພາຍໃນ 30 ວັນຫຼັງຈາກປະກາດຜົນການປະມູນ.

ໃນກໍລະນີ ພະແນກສາທາລະນະສຸກແຂວງ ເຮັດການຈັດຊື້ລວມສູນ ລາຄາທີ່ໄດ້ຮັບຈາກຜົນການປະມູນ ຕ້ອງໄດ້ແຈ້ງໃຫ້ກະຊວງສາທາລະນະສຸກ ຊາບພາຍໃນ 30 ວັນ.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ

**ມາດຕາ 16 ອົງການຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ**

ລັດຖະບານຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບ ຂະແໜງອຸດສາຫະກຳການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 17 ສິດ ແລະ ໜ້າທີ່ຮັບຜິດຊອບຂອງກະຊວງສາທາລະນະສຸກ ສິດ ແລະ ໜ້າທີ່ ຮັບຜິດຊອບຂອງກະຊວງສາທາລະນະສຸກ ມີດັ່ງນີ້:**

1. ກະຊວງສາທາລະນະສຸກ ເປັນເຈົ້າການໃນການປະສານງານກັບຂະແໜງການອື່ນທີ່ກ່ຽວຂ້ອງ ໂດຍ ສະເພາະຂະແໜງການເງິນ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າໃນນາມຄະນະຊີ້ນຳວຽກງານຄຸ້ມຄອງ ລາຄາສິນຄ້າ ແລະ ຄ່າບໍລິການ ຂັ້ນສູນກາງ ຕາມຂໍ້ຕົກລົງສະບັບເລກທີ 71/ນຍ, ລົງວັນທີ 06 ຕຸລາ 2017;

2. ເຜີຍແຜ່, ຊີ້ນຳໃຫ້ອົງການຈັດຕັ້ງທີ່ຂຶ້ນກັບຕົນ ແລະ ບັນດາຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວທາງດ້ານ ຢາ ແລະ ຜະລິດຕະພັນການແພດ ແລະ ສະຖານທີ່ບໍລິການສາທາລະນະສຸກໃນຂອບເຂດທົ່ວປະເທດໃຫ້ ປະຕິບັດການກຳນົດລາຄາຢາ ແລະ ຜະລິດຕະພັນການແພດ ຕາມຂໍ້ຕົກລົງສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ;

3. ຕ້ອງມີການເຜີຍແຜ່ລາຄາຢາ ແລະ ຜະລິດຕະພັນການແພດ ທີ່ໄດ້ຜ່ານການອະນຸມັດອອກສູ່ສາທາ ລະນະຊົນ ເຊິ່ງລວມທັງເພດານຂອງລາຄາແຕ່ລະປະເພດ ແລະ ລາຄາທີ່ປະມູນຈັດຊື້ໂດຍໃຊ້ງົບປະມານ ລັດຖະບານ ແລະ ປະກັນສຸຂະພາບ ຫຼື ປະກັນສັງຄົມ ທຸກຄັ້ງທີ່ມີການປ່ຽນແປງລາຄາ;

4. ລັດຖະມົນຕີກະຊວງສາທາລະນະສຸກ ແຕ່ງຕັ້ງຄະນະກຳມະການຄຸ້ມຄອງລາຄາຢາ ແລະ ຜະລິດຕະ ພັນການແພດ ເພື່ອເປັນເສນາທິການໃນການຊີ້ນຳ, ນຳພາຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ໂດຍມອບໃຫ້ ຫົວ ໜ້າກົມອາຫານ ແລະ ຢາ ເປັນຫົວໜ້າກອງເລຂາດັ່ງກ່າວ;

5. ຊີ້ນຳ ແລະ ປະສານສົມທົບ ບັນດາພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ ທີ່ຂຶ້ນກັບຕົນ ໃຫ້ມີການສົມທົບກັນເປັນປະຈຳ ໃນການຈັດຕັ້ງປະຕິບັດການລົງກວດກາ, ກວດສອບ ແລະ ປະຕິບັດມາດ ຕະການຕໍ່ຜູ້ກະທຳຜິດ ທີ່ຢູ່ໃນຂອບເຂດການຄຸ້ມຄອງຕາມລະບຽບການ.

**ມາດຕາ 18 ໜ້າທີ່ ຂອງກົມອາຫານ ແລະ ຢາ**

ກົມອາຫານ ແລະ ຢາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ ແລະ ມາດຕະການ ໃນການຄຸ້ມຄອງລາຄາຢາ ແລະ ຜະລິດຕະພັນການແພດ;

2. ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ກ່ຽວກັບ ລາຄາຢາ, ຜະລິດຕະພັນການແພດ ແລະ ການດຳເນີນທຸລະກິດ ລວມ ທັງສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງລາຄາ;

3. ກຳນົດລະບຽບການ ເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາຢາ ແລະ ຜະລິດ ຕະພັນການແພດ;

4. ຊີ້ນຳ, ນຳພາ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ເປັນໃຈກາງປະສານສົມທົບກັບ ຂະແໜງການອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດການ ຄຸ້ມຄອງລາຄາຢາ ແລະ ຜະລິດຕະພັນການແພດ;

5. ຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

6. ເຜີຍແຜ່ ແລະ ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

7. ຕິດຕາມການເໜັງຕີງຂອງລາຄາຢາ ແລະ ຜະລິດຕະພັນການແພດ ເປັນແຕ່ລະໄລຍະ;

8. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ, ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ລາຄາຢາ ແລະ ຜະລິດຕະພັນການແພດ;

9. ປັບໃໝຜູ້ທີ່ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມລາຍການຄວບຄຸມລາຄາ ທີ່ຕົນເປັນອົງການຄຸ້ມຄອງລາຄາ;

10. ຕິດຕາມ, ກວດກາ, ສະຫຼຸບ, ລາຍງານ ແລະ ສະເໜີ ກ່ຽວກັບ ການຈັດຕັ້ງປະຕິບັດຕາມເນື້ອໃນຂໍ້ 2, 3 ແລະ 7 ຂອງມາດຕານີ້ຕໍ່ກະຊວງອຸດສາຫະກຳການຄ້າ;

11. ອອກແຈ້ງການ, ລະບຽບການ, ຂໍ້ຕົກລົງ ແລະ ອື່ນໆ ຕາມການມອບໝາຍຂອງ ກະຊວງສາທາລະນະສຸກ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ໜ້າທີ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ**

ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ກ່ຽວກັບລາຄາຢາ, ຜະລິດຕະພັນການແພດ ແລະ ການດຳເນີນທຸລະກິດລວມທັງ ສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງລາຄາ;

2. ຊີ້ນຳ ແລະ ນຳພາ ຫ້ອງການສາທາລະນະສຸກເມືອງ, ນະຄອນ, ເທດສະບານ ແລະ ປະສານສົມທົບກັບ ພະແນກອຸດສາຫະກຳການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງ ປະຕິບັດການຄຸ້ມຄອງລາຄາຢາ ແລະ ຜະລິດ ຕະພັນການແພດ;

3. ຈັດຕັ້ງປະຕິບັດການຄຸ້ມຄອງລາຄາຢາ ຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງຕາມການມອບໝາຍຂອງ ກະຊວງກະຊວງສາທາລະນະສຸກ;

4. ເຜີຍແຜ່ ແລະ ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ ກ່ຽວຂ້ອງໃຫ້ທົ່ວເຖິງ;

5. ຕິດຕາມການເໜັງຕີງຂອງລາຄາ ເປັນແຕ່ລະໄລຍະ;

6. ຮັບພິຈາລະນາ ແກ້ໄຂ ຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ລາຄາ;

7. ປັບໃໝ ຜູ້ທີ່ລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງຂໍ້ຕົກລົງສະບັບນີ້ຢ່າງເຂັ້ມ ງວດຕາມລາຍການຄວບຄຸມລາຄາ;

8. ສະຫຼຸບ, ລາຍງານ ແລະ ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດຕາມເນື້ອໃນ ຂໍ້ 1, 2, 5 ແລະ 6 ຂອງມາດຕານີ້ ຕໍ່ກະຊວງສາທາລະນະສຸກ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກ ເມືອງ, ນະຄອນ, ເທດສະບານ**

ຫ້ອງການສາທາລະນະສຸກເມືອງ, ເທດສະບານ ມີ ສິດ ແລະ ໜ້າທີດັ່ງນີ້:

1. ຄົ້ນຄ້ວາ, ວິເຄາະ ແລະ ວິໄຈກ່ຽວກັບ ລາຄາຢາ, ຜະລິດຕະພັນການແພດ ແລະ ການດຳເນີນທຸລະກິດລວມທັງ ສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງລາຄາ;

2. ຊີ້ນຳ ແລະ ນຳພາ ໜ່ວຍງານຄຸ້ມຄອງສິນຄ້າ ແລະ ປະສານງານກັບ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໃນການຈັດ ຕັ້ງປະຕິບັດການຄຸ້ມຄອງລາຄາ;

3. ຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຕາມການມອບໝາຍຂອງ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ;

4. ເຜີຍແຜ່ ແລະ ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

5. ຕິດຕາມການເໜັງຕີງຂອງລາຄາ ເປັນແຕ່ລະໄລຍະ;

6. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ລາຄາ;

7. ປັບໃໝຜູ້ທີ່ລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດຕາມລາຍການຄວບຄຸມລາຄາ;

8. ສະຫຼຸບ, ລາຍງານ ແລະ ສະເໜີກ່ຽວກັບການຈັດຕັ້ງປະຕິບັດຕາມເນື້ອໃນ ຂໍ້: 1, 2, 5 ແລະ 6 ຂອງມາດຕານີ້ ຕໍ່ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແລະ ອົງການປົກຄອງເມືອງ, ນະຄອນ, ເທດສະບານ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດ

**ມາດຕາ 21 ສິດຂອງຜູ້ດຳເນີນທຸລະກິດ**

ສິດຂອງຜູ້ດຳເນີນທຸລະກິດ ມີສິດດັ່ງນີ້:

1. ກຳນົດລາຄາບົນພື້ນຖານກົນໄກຂອງຕະຫຼາດ ຍົກເວັ້ນແຕ່ລາຍການຢາ ທີ່ນອນໃນລາຍການຄວບຄຸມລາຄາ;

2. ສະເໜີ ຫຼື ຮ້ອງຟ້ອງ ພະນັກງານ ຫຼື ເຈົ້າໜ້າທີ່ ກ່ຽວກັບ ການປະຕິບັດງານ ເມື່ອເຫັນວ່າມີພຶດຕິກຳທີ່ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບ;

3. ນຳໃຊ້ສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 22 ພັນທະຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ມີພັນທະດັ່ງນີ້:

1. ຈົດແຈ້ງ ທຸກລາຍການທີ່ຕົນຮັບຜິດຊອບ ພ້ອມທັງແຈ້ງຄືນຖ້າມີການປ່ຽນແປງ;

2. ສົ່ງບົດລາຍງານລາຄາຢາ ແລະ ຜະລິດຕະພັນການແພດທັງໝົດ ປີລະຄັ້ງ, ສຳລັບ ລາຍການຢາ ທີ່ນອນໃນລາຍການຄວບຄຸມລາຄາ ສົ່ງກົມອາຫານ ແລະ ຢາ ທຸກໆ 6 ເດືອນ;

3. ສະແດງ ຫຼື ຕິດລາຄາຢາ ທີ່ນອນໃນລາຍການຢາຄວບຄຸມລາຄາ ຫຼື ບໍ່ຄວບຄຸມ, ປ້າຍລາຄາດັ່ງກ່າວຕ້ອງຕິດຢູ່ໃນບໍລິສັດ, ສະຖານທີ່ຮ້ານຂາຍຢາ ຫຼື ຫ້ອງຂາຍຂອງບໍລິສັດຂອງຕົນ, ການຕິດປ້າຍລາຄາຕ້ອງຈະແຈ້ງ ບໍ່ສ້າງຄວາມສັບສົນໃຫ້ແກ່ຜູ້ຊົມໃຊ້;

4. ຕ້ອງໃຫ້ຄວາມຮ່ວມມື ແກ່ການປະຕິບັດໜ້າທີ່ຂອງພະນັກງານ ຫຼື ເຈົ້າໜ້າທີ່;

5. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 23 ພັນທະຂອງໂຮງໝໍ ແລະ ຫ້ອງກວດພະຍາດຂອງລັດ**

ໂຮງໝໍ ແລະ ຫ້ອງກວດພະຍາດຂອງລັດ ມີພັນທະດັ່ງນີ້:

1. ສະແດງ ຫຼື ຕິດລາຄາຢາ ແລະ ຜະລິດຕະພັນການແພດ ທີ່ນອນໃນລາຍການຢາຄວບຄຸມລາຄາ ຫຼື ບໍ່ຄວບຄຸມ. ປ້າຍລາຄາດັ່ງກ່າວ ຕ້ອງສະແດງ ແລະ ຕິດຢູ່ໃນສະຖານທີ່ບໍລິການສາທາລະນະສຸກ;
2. ຕ້ອງໃຫ້ຄວາມຮ່ວມມື ແກ່ການປະຕິບັດໜ້າທີ່ຂອງພະນັກງານ ຫຼື ເຈົ້າໜ້າທີ່;
3. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 24 ຂໍ້ຫ້າມສຳລັບພະນັກງານ ຫຼື ເຈົ້າໜ້າທີ່ ໃນການປະຕິບັດໜ້າທີ່**

ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ ແລະ ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
2. ສວຍໃຊ້ອຳນາດເກີນຂອບເຂດ ທີ່ເປັນການບັງຄັບ ແລະ ນາບຂູ່ ເຊັ່ນ: ໃຊ້ຄວາມຮຸນແຮງ, ໃຊ້ອາວຸດ, ທໍລະມານ, ໃຊ້ການກະທຳ ແລະ ວາຈາທີ່ຫຍາບຊາ;
3. ປະລະໜ້າທີ່ ແລະ ລຶບຫຼືກການເຄື່ອນໄຫວວຽກງານ;
4. ເມີນເສີຍ, ປະໝາດ, ຂາດຄວາມຮັບຜິດຊອບ ແລະ ບິດເບືອນຄວາມຈິງ;
5. ປິດບັງ, ປົກປ້ອງ, ເຊື່ອງອຳ ແລະ ໃຫ້ຄວາມຮ່ວມມືແກ່ ຜູ້ກະທຳຄວາມຜິດ ເພື່ອຮັບ ສິນບົນ ຫຼື ຜົນປະໂຫຍດແນວອື່ນ;
6. ເປີດເຜີຍຄວາມລັບທີ່ໄດ້ຈາກຜູ້ດຳເນີນທຸລະກິດ ນອກເໜືອຈາກເປົ້າໝາຍການຄຸ້ມຄອງລາຄາ ແລະ ຜະລິດຕະພັນການແພດ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ;
7. ມີພຶດຕິກຳອື່ນ ທີ່ລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດ ມີພຶດຕິກຳດັ່ງນີ້:

1. ກະທຳການໃດໆ ໂດຍເຈດຕະນາ ຊຶ່ງເຮັດໃຫ້ລາຄາຕໍ່າ ຫຼື ສູງເກີນຄວນ ຫຼື ເຮັດໃຫ້ ເກີດຄວາມປັ່ນປ່ວນໃນສັງຄົມ;
2. ກັກຕຸນສິນຄ້າ ທີ່ນອນໃນລາຍການຄວບຄຸມລາຄາ, ໂດຍມີສິນຄ້າດັ່ງກ່າວ ໄວ້ໃນຄອບຄອງເກີນປະລິມານ ທີ່ອົງການຄຸ້ມຄອງລາຄາໄດ້ກຳນົດໄວ້;
3. ເກັບມ້ຽນສິນຄ້າໄວ້ໃນຄັງແຮສຳຮອງອື່ນນອກຈາກຄັງແຮສຳຮອງທີ່ໄດ້ລາຍງານຕໍ່ ອົງການຄຸ້ມຄອງລາຄາ;
4. ນຳເອົາສິນຄ້າ ທີ່ຢູ່ໃນລາຍການຄວບຄຸມທີ່ມີໄວ້ນັ້ນອອກຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ;
5. ຢຸດ, ປະຕິເສດ ຫຼື ແກ່ຍາວເວລາ ການຈຳໜ່າຍ ຫຼື ການບໍລິການ ໂດຍບໍ່ມີເຫດຜົນ ໃນເມື່ອມີຄຳສັ່ງຈາກອົງການຄຸ້ມຄອງລາຄາ.

# ໝວດທີ 7
# ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ ຜູ້ລະເມີດ

**ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ດຳເນີນທຸລະກິດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ດ້ວຍການດຳເນີນທຸລະກິດ ຖືກຕ້ອງ, ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນກ່ຽວກັບລາຄາຢ່າງຖືກຕ້ອງ, ຊັດເຈນ ແລະ ທັນເວລາ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆຕາມຄວາມເໝາະສົມໃນແຕ່ລະກໍລະນີ.

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ**

ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

**ມາດຕາ 28 ມາດຕະການສຶກສາອົບຮົມ**

ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ບໍ່ເປັນການກະທຳຜິດທາງອາຍາ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 29 ມາດຕະການທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການທາງວິໄນຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 30 ມາດຕະການປັບໃໝ**

ຜູ້ດຳເນີນທຸລະກິດທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ບໍ່ເປັນການກະທຳຜິດທາງອາຍາ ແລະ ພາຍຫຼັງທີ່ໄດ້ຮັບການຕັກເຕືອນ ແລະ ສຶກສາອົບຮົມມາແລ້ວສອງຄັ້ງ, ຈະຖືກປັບໃໝຕາມແຕ່ລະກໍລະນີ ຕາມດຳລັດວ່າດ້ວຍການຄຸ້ມຄອງ ລາຄາສິນຄ້າ ແລະ ລາຄາບໍລິການ ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010 ດັ່ງລຸ່ມນີ້:

1. ບໍ່ຕິດປ້າຍລາຄາ ມີໂທດປັບໃໝແຕ່ 500.000 ກີບ ຫາ 1.000.000 ກີບ/ ຄັ້ງ/ລາຍການ;

2. ແຈ້ງຂໍ້ມູນເທັດ ກ່ຽວກັບໂຄງປະກອບລາຄາ ຫຼື ຄັງແຮສຳຮອງມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;

3. ບໍ່ແຈ້ງໂຄງປະກອບລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;

4. ນຳເອົາສິນຄ້າທີ່ມີໄວ້ໃນຄັງແຮສຳຮອງອອກຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການ ຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;

5. ຢຸດ, ປະຕິເສດ ຫຼື ແກ່ຍາວເວລາ ການຈໍາໜ່າຍ ຫຼື ການບໍລິການ ໂດຍບໍ່ມີເຫດຜົນໃນເມື່ອມີຄໍາສັ່ງຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;

6. ນໍາໃຊ້ໂຄງປະກອບລາຄາ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາມີໂທດປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ/ຄັ້ງ/ລາຍການ.

**ມາດຕາ 31 ມາດຕະການທາງແພ່ງ ແລະ ທາງອາຍາ**

ມາດຕະການທາງແພ່ງ ແລະ ທາງອາຍາ ແມ່ນໃຫ້ອີງໃສ່ລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 32 ມາດຕະການໂທດເພີ່ມ**

ຜູ້ດໍາເນີນທຸລະກິດທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ສາມາດຖືກປະຕິບັດມາດຕະການໂທດເພີ່ມເຊັ່ນ: ໂຈະ ຫຼື ຖອນໃບທະບຽນວິຊາສະເພາະ, ໃບອະນຸຍາດຕ່າງໆ, ຮິບວັດຖຸສິ່ງຂອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ກະຊວງສາທາລະນະສຸກມອບໃຫ້ກົມອາຫານ ແລະຢາ ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 34 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ ສິບຫ້າວັນ ນັບແຕ່ວັນທີໄດ້ລົງລາຍເຊັນປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ປອ.ດຣ. ບຸນແຝງ ພູມມະໄລສິດ